ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ

ຄະນະເລຂາທິການສູນກາງພັກ ເລກທີ 173/ຄລສພ

ນະຄອນຫຼວງວຽງຈັນ, ວັນທີ 05 ກໍລະກົດ 2024

# ຄໍາສັ່ງ

## ຂອງຄະນະເລຂາທິການສູນກາງພັກ

## ວ່າດ້ວຍການຄາດຄະເນແບ່ງຄວາມຮັບຜິດຊອບ ຂອງຄະນະປະຈໍາພັກ ແຕ່ລະຂັ້ນ

**ເຖິງ: ຄະນະປະຈໍາພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງວຽງຈັນ, ເມືອງ-ນະຄອນ ໃນທົ່ວປະເທດ.**

- ອີງຕາມ ກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XI;
- ອີງຕາມ ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 031/ກມສພ, ລົງວັນທີ 02 ມັງກອນ 2018 ວ່າດ້ວຍວຽກງານຄຸ້ມຄອງພະນັກງານ;
- ອີງຕາມ ຄໍາສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 411/ຄລສພ, ລົງວັນທີ 08 ສິງຫາ 2023 ວ່າດ້ວຍການກະກຽມ ແລະ ດໍາເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ;
- ອີງຕາມ ການຕົກລົງເຫັນດີຂອງກອງປະຊຸມກົມການເມືອງສູນກາງພັກ ຮ່ວມ ຄະນະເລຂາທິການສູນກາງພັກ ຄັ້ງວັນທີ 28-29 ພຶດສະພາ ແລະ ວັນທີ 28 ມິຖຸນາ 2024.

## ຄະນະເລຂາທິການສູນກາງພັກ ອອກຄໍາສັ່ງ:

### I. ຈຸດປະສົງ.

**1.** ເພື່ອຍົກສູງຄວາມສາມາດນໍາພາຕໍ່ທຸກຂົງເຂດວຽກງານ ແລະ ເພີ່ມທະວີກໍາລັງແຮງສູ້ຮົບຂອງພັກ ຕິດພັນກັບການສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ; ທັງເປັນການປັບປຸງແບບແຜນການນໍາພາ ແລະ ວິທີເຮັດວຽກຂອງຄະນະບໍລິຫານງານພັກ, ຂອງຄະນະປະຈໍາພັກ ແຕ່ລະຂັ້ນ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ສ້າງຄວາມເຊື່ອໝັ້ນສັດທາຂອງມະຫາຊົນ ຕໍ່ການນໍາພາຂອງພັກ; ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການ ແລະ ການເລັ່ງທວງໃນການປະຕິບັດໜ້າທີ່ການເມືອງຂອງພັກ ຢູ່ແຕ່ລະຂັ້ນໃນໄລຍະໃໝ່;

**2.** ຮັບປະກັນການນໍາພາວຽກງານຮອບດ້ານ ຂອງອົງຄະນະພັກ ຕໍ່ບັນດາຂົງເຂດວຽກງານທີ່ສໍາຄັນ, ສອດຄ່ອງກັບສະພາບການ ແລະ ການເລັ່ງທວງຕົວຈິງ ໃນການນໍາພາຂອງຄະນະພັກ ແຕ່ລະຂັ້ນ;

**3.** ເພື່ອເປັນບ່ອນອີງໃຫ້ແກ່ອົງຄະນະພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງວຽງຈັນ ແລະ ອົງຄະນະພັກເມືອງ-ນະຄອນ ໃນການຄົ້ນຄວ້າຄາດຄະເນບຸກຄະລາກອນ ທີ່ເໝາະສົມເຂົ້າໃນໂຄງປະກອບຄະນະພັກ, ຄະນະປະຈໍາພັກ ຕິດພັນກັບການກະກຽມ ແລະ ດໍາເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ, ໃຫ້ສອດຄ່ອງກັບສະພາບຕົວຈິງຂອງບຸກຄະລາກອນ ແລະ ຄວາມຮຽກຮ້ອງຕ້ອງການຂອງວຽກງານ ຢູ່ແຕ່ລະຂົງເຂດ.

**II. ການກຳນົດຈຳນວນຄະນະປະຈຳພັກ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ.**

**1.** ຄະນະບໍລິຫານງານພັກຂັ້ນໃດ ທີ່ມີຈຳນວນ 09 ສະຫາຍ ຂຶ້ນໄປ ແມ່ນໃຫ້ມີຄະນະປະຈຳພັກ, ແຕ່ຈຳນວນຄະນະປະຈຳພັກ ບໍ່ໃຫ້ເກີນ 1/3 ຂອງຈຳນວນຄະນະບໍລິຫານງານພັກ ຂັ້ນຕົນ;

**2.** ຄະນະບໍລິຫານງານພັກ ແຕ່ລະຂັ້ນ ໃຫ້ມີຮອງເລຂາຄະນະພັກ ດັ່ງນີ້:

- **ຄະນະບໍລິຫານງານພັກກະຊວງ-ອົງການ:** ໃຫ້ມີຮອງເລຂາຄະນະບໍລິຫານງານພັກກະຊວງ-ອົງການ 01 ສະຫາຍ, ຍົກເວັ້ນຄະນະບໍລິຫານງານພັກກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສູນກາງແນວລາວສ້າງຊາດ ໃຫ້ມີຮອງເລຂາຄະນະບໍລິຫານງານພັກ 02 ສະຫາຍ;
- **ຄະນະບໍລິຫານງານພັກແຂວງ-ນະຄອນຫຼວງວຽງຈັນ ແລະ ຄະນະບໍລິຫານງານພັກເມືອງ-ນະຄອນ:** ໃຫ້ມີຮອງເລຂາຄະນະບໍລິຫານງານພັກ 02 ສະຫາຍ;
- **ຄະນະບໍລິຫານງານພັກທຽບເທົ່າອົງຄະນະພັກເມືອງ-ນະຄອນ ແລະ ຮາກຖານພັກ:** ໃຫ້ມີຮອງເລຂາຄະນະບໍລິຫານງານພັກ 01 ສະຫາຍ.

**III. ການຄາດຄະເນແບ່ງຄວາມຮັບຜິດຊອບ ຂອງຄະນະປະຈຳພັກ (ອົງຄະນະພັກ ທີ່ມີຄະນະປະຈຳພັກ) ແລະ ຄະນະບໍລິຫານງານພັກ (ອົງຄະນະພັກ ທີ່ບໍ່ມີຄະນະປະຈຳພັກ).**

**ກ. ຄາດຄະເນການແບ່ງຄວາມຮັບຜິດຊອບຄະນະປະຈຳພັກກະຊວງ-ອົງການ ໃຫ້ປະຕິບັດດັ່ງນີ້:**

**1.** ເລຂາຄະນະບໍລິຫານງານພັກກະຊວງ-ອົງການ: ເປັນລັດຖະມົນຕີກະຊວງ-ຫົວໜ້າອົງການ, ຮັບຜິດຊອບນຳພາ-ຊີ້ນຳວຽກງານຮອບດ້ານ, ວຽກງານການເມືອງແນວຄິດ, ວຽກງານພັກ-ພະນັກງານ, ຊີ້ນຳກົມຈັດຕັ້ງ-ພະນັກງານ ແລະ ຮັບຜິດຊອບໂດຍກົງ ຕໍ່ຜົນໄດ້, ຜົນເສຍໃນການນຳພາຈັດຕັ້ງປະຕິບັດໜ້າທີ່ການເມືອງ ຂອງກະຊວງ-ອົງການຕົນ;

**2.** ຮອງເລຂາຄະນະບໍລິຫານງານພັກກະຊວງ-ອົງການ: ເປັນຮອງລັດຖະມົນຕີກະຊວງ-ຮອງຫົວໜ້າອົງການ, ຊ່ວຍເລຂາຄະນະພັກກະຊວງ-ອົງການ ໃນວຽກງານກໍ່ສ້າງພັກ-ພະນັກງານ ແລະ ຮັບຜິດຊອບຊີ້ນຳວຽກງານປັບປຸງກົງຈັກການຈັດຕັ້ງ, ອົງການຈັດຕັ້ງມະຫາຊົນ ແລະ ຮັບຜິດຊອບວຽກງານວິຊາສະເພາະ ຕາມການແບ່ງງານ;

**3.** ກຳມະການປະຈຳພັກກະຊວງ-ອົງການ: ເປັນປະທານຄະນະກວດກາພັກກະຊວງ-ອົງການ, ຊີ້ນຳວຽກງານກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ເປັນຮອງລັດຖະມົນຕີກະຊວງ-ຮອງຫົວໜ້າອົງການ ຮັບຜິດຊອບວຽກງານວິຊາສະເພາະ ຕາມການແບ່ງງານ;

**4.** ກຳມະການປະຈຳພັກກະຊວງ-ອົງການ: ເປັນຮອງລັດຖະມົນຕີກະຊວງ-ຮອງຫົວໜ້າອົງການ ຮັບຜິດຊອບວຽກງານວິຊາສະເພາະ ຕາມການແບ່ງງານ;

**5.** ສ່ວນກຳມະການປະຈຳພັກກະຊວງ-ອົງການ ສະຫາຍອື່ນ ທີ່ໄດ້ຮັບການເລືອກຕັ້ງໃນກອງປະຊຸມໃຫຍ່ຂັ້ນຕົນ ແມ່ນໃຫ້ແບ່ງງານນຳພາໃນບາງຂົງເຂດ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ຂອງແຕ່ລະອົງຄະນະພັກ ເປັນຕົ້ນ: ຫົວໜ້າກົມຈັດຕັ້ງພະນັກງານ, ກົມກວດກາ (ອົງຄະນະພັກ ທີ່ມີກົມກວດກາ), ຫ້ອງການ ແລະ ຫົວໜ້າກົມໃດໜຶ່ງ ທີ່ເປັນກົມສຳຄັນໃນດ້ານວິຊາການ ຂອງຂະແໜງການຕົນ;

6. ສໍາລັບການແບ່ງຄວາມຮັບຜິດຊອບຂອງຄະນະປະຈໍາພັກ ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ສູນກາງແນວລາວສ້າງຊາດ ແລະ ສະພາແຫ່ງຊາດ ແມ່ນໃຫ້ອີງໃສ່ຈໍານວນຄະນະປະຈໍາພັກຂອງແຕ່ລະອົງຄະນະພັກນັ້ນ ເພື່ອຈັດວາງໃຫ້ສອດຄ່ອງກັບຄວາມສໍາຄັນ-ຄວາມຈໍາເປັນ ກໍຄືຄວາມຮຽກຮ້ອງຕ້ອງການ ຕາມໜ້າທີ່ການເມືອງ ຂອງແຕ່ລະຂົງເຂດວຽກງານ.

**ຂ. ຄາດຄະເນແບ່ງຄວາມຮັບຜິດຊອບຂອງອົງຄະນະພັກກະຊວງ-ອົງການ ທີ່ບໍ່ມີຄະນະປະຈໍາພັກ (ຄະນະບໍລິຫານງານພັກ ບໍ່ເຖິງ 09 ສະຫາຍ) ໃຫ້ປະຕິບັດດັ່ງນີ້:**

1. ເລຂາຄະນະບໍລິຫານງານພັກກະຊວງ-ອົງການ: ເປັນລັດຖະມົນຕີກະຊວງ-ຫົວໜ້າອົງການ, ຮັບຜິດຊອບນໍາພາ-ຊີ້ນໍາວຽກງານຮອບດ້ານ, ວຽກງານການເມືອງແນວຄິດ, ວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ, ວຽກງານກວດກາ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ຮັບຜິດຊອບໂດຍກົງ ຕໍ່ຜົນໄດ້, ຜົນເສຍໃນການນໍາພາຈັດຕັ້ງປະຕິບັດໜ້າທີ່ການເມືອງ ຂອງກະຊວງ-ອົງການຕົນ;

2. ຮອງເລຂາຄະນະບໍລິຫານງານພັກກະຊວງ-ອົງການ: ເປັນຮອງລັດຖະມົນຕີກະຊວງ-ຮອງຫົວໜ້າອົງການ ຮັບຜິດຊອບຊີ້ນໍາວຽກງານປັບປຸງກົງຈັກການຈັດຕັ້ງ, ອົງການຈັດຕັ້ງມະຫາຊົນ ແລະ ຮັບຜິດຊອບວຽກງານວິຊາສະເພາະ ຕາມການແບ່ງງານ;

3. ກໍາມະການຄະນະບໍລິຫານງານພັກ: ເປັນປະທານຄະນະກວດກາພັກກະຊວງ-ອົງການ, ເປັນຮອງລັດຖະມົນຕີກະຊວງ-ຮອງຫົວໜ້າອົງການ ຮັບຜິດຊອບວຽກງານວິຊາສະເພາະ ຕາມການແບ່ງານ.

**ຄ. ຄາດຄະເນການແບ່ງຄວາມຮັບຜິດຊອບ ຄະນະປະຈໍາພັກແຂວງ-ນະຄອນຫຼວງວຽງຈັນ ໃຫ້ປະຕິບັດດັ່ງນີ້:**

1. ເລຂາຄະນະບໍລິຫານງານພັກແຂວງ: ເປັນປະທານສະພາປະຊາຊົນແຂວງ-ນະຄອນຫຼວງວຽງຈັນ, ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ ແລະ ເປັນປະທານຄະນະກໍາມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງ-ນະຄອນຫຼວງວຽງຈັນ, ຮັບຜິດຊອບນໍາພາ-ຊີ້ນໍາວຽກງານຮອບດ້ານ ແລະ ຮັບຜິດຊອບໂດຍກົງ ຕໍ່ຜົນໄດ້, ຜົນເສຍໃນການນໍາພາຈັດຕັ້ງປະຕິບັດໜ້າທີ່ການເມືອງ ຂອງແຂວງ-ນະຄອນຫຼວງວຽງຈັນ;

2. ຮອງເລຂາຄະນະບໍລິຫານງານພັກແຂວງ-ນະຄອນຫຼວງວຽງຈັນ: ເປັນປະທານຄະນະກໍາມະການປົກຄອງແຂວງ-ນະຄອນຫຼວງວຽງຈັນ;

3. ຮອງເລຂາຄະນະບໍລິຫານງານພັກແຂວງ-ນະຄອນຫຼວງວຽງຈັນ: ຮັບຜິດຊອບຊີ້ນໍາວຽກງານການເມືອງແນວຄິດ, ວຽກງານພັກ-ພະນັກງານ, ວຽກງານປັບປຸງກົງຈັກການຈັດຕັ້ງ ແລະ ອົງການຈັດຕັ້ງມະຫາຊົນ;

4. ສ່ວນກໍາມະການປະຈໍາພັກແຂວງ-ນະຄອນຫຼວງວຽງຈັນ ສະຫາຍອື່ນ ທີ່ໄດ້ຮັບການເລືອກຕັ້ງນັ້ນແມ່ນແບ່ງງານນໍາພາໃນບາງຂົງເຂດ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ຂອງແຕ່ລະອົງຄະນະພັກເປັນຕົ້ນ: ປະທານແນວລາວສ້າງຊາດ, ຫົວໜ້າຄະນະຈັດຕັ້ງ, ປະທານຄະນະກວດກາພັກ-ລັດ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຮອງປະທານສະພາປະຊາຊົນ, ຮອງປະທານຄະນະກໍາມະການປົກຄອງແຂວງ-ນະຄອນຫຼວງວຽງຈັນ, ເລຂາຄະນະບໍລິຫານງານພັກເມືອງ-ນະຄອນ ໃນເທດສະບານແຂວງ-ນະຄອນຫຼວງວຽງຈັນ.

ງ. ຄາດຄະເນການແບ່ງຄວາມຮັບຜິດຊອບຄະນະປະຈໍາພັກເມືອງ-ນະຄອນ ໃຫ້ປະຕິບັດດັ່ງນີ້:

**1.** ເລຂາຄະນະບໍລິຫານງານພັກເມືອງ-ນະຄອນ: ຮັບຜິດຊອບນໍາພາ-ຊີ້ນໍາວຽກງານຮອບດ້ານ ແລະ ຮັບຜິດຊອບໂດຍກົງ ຕໍ່ຜົນໄດ້, ຜົນເສຍໃນການນໍາພາຈັດຕັ້ງປະຕິບັດໜ້າທີ່ການເມືອງ ຂອງເມືອງ-ນະຄອນ ແລະ ເປັນສະມາຊິກສະພາປະຊາຊົນແຂວງ-ນະຄອນຫຼວງວຽງຈັນ, ທັງເປັນຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ-ນະຄອນຫຼວງວຽງຈັນ ປະຈໍາເຂດເລືອກຕັ້ງຢູ່ເມືອງ-ນະຄອນ;

**2.** ຮອງເລຂາຄະນະບໍລິການງານພັກເມືອງ-ນະຄອນ: ເປັນປະທານຄະນະກໍາມະການປົກຄອງເມືອງ-ນະຄອນ;

**3.** ຮອງເລຂາຄະນະບໍລິຫານງານພັກເມືອງ-ນະຄອນ: ຮັບຜິດຊອບຊີ້ນໍາວຽກງານການເມືອງແນວຄິດ, ວຽກງານພັກ-ພະນັກງານ, ວຽກງານປັບປຸງກົງຈັກການຈັດຕັ້ງ ແລະ ອົງການຈັດຕັ້ງມະຫາຊົນຂອງເມືອງ-ນະຄອນ;

**4.** ສ່ວນກໍາມະການປະຈໍາພັກເມືອງ-ນະຄອນ ສະຫາຍອື່ນ ທີ່ໄດ້ຮັບການເລືອກຕັ້ງນັ້ນ ແມ່ນແບ່ງງານນໍາພາໃນບາງຂົງເຂດ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ຂອງແຕ່ລະອົງຄະນະພັກ ເປັນຕົ້ນ: ປະທານແນວລາວສ້າງຊາດ, ຫົວໜ້າຄະນະຈັດຕັ້ງ, ປະທານຄະນະກວດກາພັກ-ລັດ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຮອງປະທານຄະນະກໍາມະການປົກຄອງເມືອງ-ນະຄອນ.

## IV. ວິທີຈັດຕັ້ງປະຕິບັດ

**1.** ຄະນະບໍລິຫານງານພັກ, ຄະນະປະຈໍາພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງວຽງຈັນ ແລະ ບັນດາເມືອງ-ນະຄອນ ຕ້ອງຄົ້ນຄວ້າ, ເຊື່ອມຊຶມ ແລະ ກໍາແໜ້ນຄໍາສັ່ງສະບັບນີ້ ໃຫ້ເລິກເຊິ່ງ ພ້ອມທັງຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ເຂັ້ມງວດ;

**2.** ໃນໄລຍະກະກຽມ ແລະ ດໍາເນີນກອງປະຊຸມໃຫຍ່ອົງຄະນະພັກຂັ້ນຂອງຕົນ ຕ້ອງໄດ້ຄົ້ນຄວ້າ ແລະ ຄາດຄະເນການສັບຊ້ອນ, ຈັດວາງບຸກຄະລາກອນ ໄປຕາມທິດດັ່ງກ່າວ;

**3.** ຜ່ານການຈັດຕັ້ງປະຕິບັດ ຄໍາສັ່ງສະບັບນີ້, ຖ້າມີບັນຫາໃດ ບໍ່ຈະແຈ້ງ ຫຼື ພົບຄວາມຫຍຸ້ງຍາກ ໃຫ້ລາຍງານ ຕໍ່ຄະນະເລຂາທິການສູນກາງພັກ (ໂດຍຜ່ານຄະນະຈັດຕັ້ງສູນກາງພັກ) ເພື່ອໃຫ້ການຊີ້ນໍາທັນເວລາ;

**4.** ຄໍາສັ່ງສະບັບນີ້ ປ່ຽນແທນຄໍາສັ່ງແນະນໍາ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 11/ຄລສພ, ລົງວັນທີ 21 ສິງຫາ 2019 ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຕ. ຄະນະເລຂາທິການສູນກາງພັກ
ຜູ້ປະຈໍາການ

ປອ ບຸນທອງ ຈິດມະນີ